**ບົດຂ່າວ ປະຈຳເດືອນ**
**ກັນຍາ - ພະຈິກ 2023**



# SuPER WE Coffee

## ວຽກເດັ່ນຂອງ ໂຄງການປີ 2023

**ກັນຍາ:** ກອງປະຊຸມ ຄູ່ຮ່ວມພັດທະນາ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ເຊກອງ, ວາງສະແດງຜະລິດຕະພັນ ກາເຟພູດອຍດາກຈຶງ ໃນງານບຸນກາເຟບ້ານເຮົາ ປະຈຳປີ 2023, ນະຄອນຫຼວງວຽງຈັນ

**ຕຸລາ:** ຝຶກອົບຮົມ ການປຸງແຕ່ງກາເຟຫຼັງການເກັບກ່ຽວ ທີ່ ສູນຄົ້ນຄ້ວາກະສິກຳພາກໃຕ້, ວາງສະແດງຜະລິດຕະພັນ ກາເຟພູດອຍດາກຈຶງ ໃນງານບຸນກາເຟບ້ານເຮົາ ປະຈຳປີ 2023, ແຂວງ ຫຼວງພະບາງ

**ພະຈິກ:** ຕ້ອນຮັບການລົງມາຢ້ຽມຢາມໂຄງການຈາກ ສະຫະພາບ ເອີຣົບ ແລະ ແຄຣ໌ ຝຣັ່ງ, ການປະເມີນ ລະບົບຕ່ອງໂສ້ມູນຄ້າ ເພີ່ມແບບມີສ່ວນຮ່ວມ

### ຜູ້ທີ່ໄດ້ຮັບຜົນປະໂຫຍດ
**ກັນຍາ - ພະຈິກ 2023**

ຊາວສວນກາເຟ
**369**

ແມ່ຍິງຊົນເຜົ່າ
**201**

## ປະຫວັດຄວາມເປັນມາ

ໂຄງການ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບຕ່ອງໂສ້ ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໃນແຂວງ ເຊກອງ ຈະໄດ້ສ້າງຄວາມອາດສາມາດ ໃຫ້ຊາວສ່ວນກາເຟ ສາມາດຍົກສະມັດຕະພາບ ການຜະລິດກາເຟໃຫ້ໄດ້ຜົນຜະລິດສູງ ແລະ ມີຄຸນະພາບ ແລະ ເພີ່ມລາຍຮັບໃນຄອບຄົວໃຫ້ສູງຂຶ້ນ ໂດຍຜ່ານ ການສະໜັບສະໜູນສ້າງຕັ້ງສູນແປຮູບກາເຟ, ສະໜອງເຕັກນິກ ການປູກ ແລະ ການແປຮູບໃຫ້ແກ່ກຸ່ມຜະລິດ, ສະໜອງອຸປະກອນທີ່ຈຳເປັນໃນການປູກ ແລະ ແປຮູບກາເຟ. ຈຸດປະສົງຂອງໂຄງການແມ່ນເພື່ອ ສະໜັບສະໜູນການພັດທະນາເສດຖະກິດ ທີ່ເປັນມິດກັບສິ່ງແວດລ້ອມ, ເພີ່ມທະວີການຮ່ວມມືກັບໜ່ວຍງານສະຫະກອນ ເຊັ່ນດຽວກັນກັບການສ້າງຄວາມສາມາດໃຫ້ແກ່ແມ່ຍິງຜູ້ຜະລິດກາເຟໂດຍເຊື່ອມໂຍງການຮ່ວມມືວຽກງານບົດບາດທາງເພດ, ການເປັນຜູ້ນຳ ແລະ ຜູ້ປະກອບການ.

## ທີ່ຕັ້ງໂຄງການ






## ກັນຍາ

## ກອງປະຊຸມ ຄູ່ຮ່ວມພັດທະນາ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ເຊກອງ



ວັນທີ 21 ກັນຍາ 2023, ທີມງານໂຄງການຊຸບເປີວີ ໄດ້ເຂົ້າຮ່ວມກອງປະຊຸມ ຄູ່ຮ່ວມພັດທະນາ ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ ທີ່ຫ້ອງປະຊຸມ ແຂວງ ເຊກອງ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 57 ທ່ານ (ແມ່ຍິງ 20 ທ່ານ). ຈຸດປະສົງກໍແມ່ນ ເພື່ອສົ່ງເສີມໃຫ້ແມ່ຍິງໃນກຸ່ມຜະລິດຕະພັນກາເຟໄດ້ຮຽນຮູ້ກ່ຽວກັບການຜະລິດ ແລະ ການບໍລິໂພກແບບຍືນຍົງ ແລະ ສາມາດຈັດຕັ້ງປະຕິບັດກິດຈະກຳການຕະຫຼາດທີ່ເປັນມິດກັບສິ່ງແວດລ້ອມໄດ້. ກອງປະຊຸມຍັງໄດ້ເປີດໂອກາດໃຫ້ຊາວກະສິກອນເພດຍິງ ໄດ້ມີໂອກາດສ້າງເຄືອຂ່າຍ ແລະ ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການຜະລິດກາເຟ, ການຕະຫຼາດ ແລະ ການໂຄສະນາ ເປັນຕົ້ນ.




## ກັນຍາ

## ວາງສະແດງຜະລິດຕະພັນກາເຟພູດອຍດາກຈຶງ ໃນງານບຸນກາເຟບ້ານເຮົາ ປະຈຳປີ 2023 ທີ່ວຽງຈັນເຊັນເຕີ້



ວັນທີ 29 ກັນຍາ - 1 ຕຸລາ 2023, ໂຄງການຊຸບເປີວີ ໄດ້ເຂົ້າຮ່ວມວາງສະແດງ ຜະລິດຕະພັນກາເຟພູດອຍດາກຈຶງ ໃນງານບຸນກາເຟບ້ານເຮົາ ປະຈຳປີ 2023 ທີ່ສູນການຄ້າວຽງຈັນເຊັນເຕີ້. ພາຍໃນງານກາເຟພູດອຍດາກຈຶງແມ່ນໄດ້ຮັບຄວາມສົນໃຈຫຼາຍ ເຊິ່ງສາມາດຂາຍໄດ້ທັງໝົດ 37 ຖົງ ລວມເປັນເງິນທັງໝົດ 2,490,000 ກີບ. ພາຍໃນງານ ກຸ່ມຜູ້ຜະລິດກາເຟຍັງໄດ້ໂອກາດໃນການຂຶ້ນສົນທະນາໃນຫົວຂໍ້ "ທ່າແຮງຂອງກາເຟພິເສດ ແລະ ການແຂ່ງຂັນກາເຟໝາກຊ້ອມ ຢູ່ ສປປ ລາວ" ຊາວສວນກາເຟຂອງພວກເຮົາບໍ່ໄດ້ຮັບພຽງແຕ່ຄວາມຮູ້ ແລະ ທັກສະທີ່ຫຼາກຫຼາຍໃນກາເຟເທົ່ານັ້ນ, ແຕ່ຍັງມີເຄືອຂ່າຍທີ່ເຂັ້ມແຂງ ແລະ ມີຄວາມມຸ່ງໝັ້ນຢ່າງເລິກເຊິ່ງໃນການສ້າງອະນາຄົດກາເຟໃຫ້ເຕີບໂຕສຳລັບຕົນເອງ ແລະ ຊຸມຊົນຂອງພວກເຂົາ. ພ້ອມກັນນີ້, ພວກເຂົາຍັງມ່ວນຊື່ນກັບການຮຽນຮູ້ ແລະ ຊອກຫາປະສົບການໃໝ່ເຫຼົ່ານີ້ຢ່າງແທ້ຈິງ.

switchasia GRANTS PROGRAMME · Haliéus COOPERATIVES FOR DEVELOPMENT · 4FORM · International Cooperative Alliance Asia and Pacific · ITC International Training Centre · FAIRTRADE ITALIA




ຕຸລາ

## ຝຶກອົບຮົມ ການປຸງແຕ່ງກາເຟຫຼັງການເກັບກ່ຽວ ທີ່ ສູນຄົ້ນຄ້ວາກະສິກຳພາກໃຕ້

ວັນທີ 2 - 7 ຕຸລາ 2023, ທ່ານ ນາງ ຈິນຊີ ເພັດໄລສີ ຈາກບ້ານ ດາກເດັນ ໜຶ່ງໃນຜູ້ຜະລິດກາເຟ ຂອງໂຄງການ ຊຸບເປີວີ ໄດ້ເຂົ້າຮ່ວມຝຶກອົບຮົມ ການປຸງແຕ່ງກາເຟຫຼັງການເກັບກ່ຽວ ພາຍໃຕ້ການສະໜັບສະໜູນຈາກ ໂຄງການ ຄລີນ (CLEAN) ໂດຍໂຄງການ ວິນລັອກ (Winrock), ທີ່ສູນຄົ້ນຄວ້າກະສິກຳຫຼັກ 35, ເມືອງ ປາກຊ່ອງ, ແຂວງ ຈຳປາສັກ. ການເຂົ້າຮ່ວມໃນຄັ້ງນີ້ ໄດ້ຊ່ວຍເຮັດໃຫ້ຮູ້ກ່ຽວກັບເຕັກໂນໂລຊີທີ່ຊ່ວຍເຮັດໃຫ້ມີການປຸງແຕ່ງກາເຟມີຄຸນະພາບດີ, ການຄວບຄຸມຄຸນະພາບໃນເມັດກາເຟທີ່ປຸງແຕ່ງແບບທຳມະຊາດ, ນ້ຳເຜີ້ງ (honey) ແລະ ແບບປຽກ (washed), ໄດ້ພັດທະນາທັກສະໃນການປຸງແຕ່ງກາເຟ ເພື່ອໃຫ້ໄດ້ຣົດຊາດທີ່ແຕກຕ່າງກັນ.






ຕຸລາ

## ວາງສະແດງຜະລິດຕະພັນກາເຟພູດອຍດາກຈຶງ ໃນງານບຸນກາເຟບ້ານເຮົາ ປະຈຳປີ 2023, ແຂວງ ຫຼວງພະບາງ

ໃນວັນທີ 27 - 29 ຕຸລາ 2023, ທີມງານໂຄງການຊຸບເປີວີ ໄດ້ເຂົ້າຮ່ວມວາງສະແດງຜະລິດຕະພັນກາເຟພູດອຍດາກຈຶງ ໃນງານບຸນກາເຟບ້ານເຮົາ ປະຈຳປີ 2023 ທີ່ເຮືອນຈັນ, ຫຼວງພະບາງ. ພາຍໃນງານກາເຟພູດອຍດາກຈຶງແມ່ນໄດ້ຮັບຄວາມສົນໃຈຫຼາຍ ເຊິ່ງສາມາດຂາຍໄດ້ທັງໝົດ 50 ຖົງ ລວມເປັນເງິນທັງໝົດ 3,479,000 ກີບ. ນອກຈາກນີ້, ຕົວແທນກຸ່ມຜະລິດກາເຟຂອງໂຄງການ ຍັງໄດ້ເຂົ້າຮ່ວມກິດຈະກຳການຕະຫຼາດທີ່ເປັນມິດກັບສິ່ງແວດລ້ອມ ແລະ ຮຽນຮູ້ເຕັກນິກການຜະລິດກາເຟພິເສດ ເພື່ອຍົກລະດັບຄຸນະພາບຂອງກາເຟຂອງເຂົາເຈົ້າ. ໃນໂອກາດດັ່ງກ່າວ ຍັງໄດ້ເຮັດໃຫ້ຊາວກະສິກອນກາເຟໄດ້ແລກປ່ຽນບົດຮຽນທາງດ້ານເຕັກນິກ ແລະ ຂໍ້ມູນການຕະຫຼາດກັບບັນດາເຄືອຂ່າຍຮ້ານກາເຟ ແລະ ກຸ່ມສະຫະກອນກາເຟ.




switchasia GRANTS PROGRAMME
Haliéus COOPERATIVES FOR DEVELOPMENT
4FORM
coop International Cooperative Alliance Asia and Pacific
ITC International Training Centre
FAIRTRADE ITALIA



ພະຈິກ

## ຕ້ອນຮັບການມາຢ້ຽມຢາມໂຄງການຈາກ ສະຫະພາບ ເອີຣົບ



ວັນທີ 8 ພະຈິກ 2023, ໂຄງການຊຸບເປີວີ ໄດ້ຕ້ອນຮັບ ທ່ານ ອິນປອນ ແສນຄໍາຕີ, ຜູ້ຕາງໜ້າ ສະຫະພາບ ເອີຣົບ ປະຈໍາ ສປປ ລາວ ແລະ ທ່ານ ນາງ ຄາລ້າ ໂຄເຊ, ຜູ້ຕາງໜ້າ ຈາກ ອົງການແຄຣ໌ ຝຣັ່ງ ທີ່ໄດ້ລົງມາຢ້ຽມຢາມທີ່ ເມືອງ ດາກຈຶງ, ແຂວງ ເຊກອງ. ການລົງຢ້ຽມຢາມໃນຄັ້ງນີ້ ກໍແມ່ນເພື່ອ ພົບປະ ແລະ ຂໍທິດຊີ້ນໍາຈາກເຈົ້າເມືອງ ດາກຈຶງ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມຜະລິດກາເຟ, ລົງຕິດຕາມ ແລະ ຮັບຟັງ ການລາຍງານຕໍ່ກັບຜົນໄດ້ຮັບ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດກິດຈະກໍາທີ່ ຜ່ານມາ ລວມເຖິງຮ່ວມກັນປຶກສາຫາລື ເພື່ອວາງແຜນກິດຈະກໍາທີ່ຈະສືບຕໍ່ຈັດຕັ້ງ ປະຕິບັດໃນຕໍ່ໜ້າ.



ພະຈິກ

## ການປະເມີນລະບົບຕ່ອງໂສ້ມູນຄ້າເພີ່ມແບບມີສ່ວນຮ່ວມ



ວັນທີ 9-15 ພະຈິກ 2023, ທີມງານໂຄງການຊຸບເປີວີ ໄດ້ເຂົ້າຮ່ວມການປະເມີນ ລະບົບຕ່ອງໂສ້ມູນຄ່າເພີ່ມແບບມີສ່ວນຮ່ວມ ທີ່ເມືອງ ປາກຊ່ອງ, ແຂວງ ຈໍາປາສັກ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 42 ທ່ານ (ແມ່ຍິງ 18 ທ່ານ). ການເຂົ້າຮ່ວມໃນຄັ້ງນີ້ ກໍ ແມ່ນເພື່ອ ເປັນການເຊື່ອມໂຍງຊາວສວນກາເຟກັບຕະຫຼາດພາຍໃນທ້ອງຖິ່ນ ແລະ ເຂົ້າໃຈພື້ນຖານ ກ່ຽວກັບແນວຄວາມຄິດຂອງການວິເຄາະລະບົບຕ່ອງໂສ້ມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ. ພວກເຂົາຍັງໄດ້ແລກປ່ຽນບົດຮຽນຮ່ວມກັບສະມາຊິກຈາກ ສະຫະກອນໃຈກາເຟ, ກຸ່ມຜະລິດພູພຽງບໍລະເວນ, ກຸ່ມຜະລິດກາເຟຊີວິພາບແບບຍືນຍົງ ແລະ ບັນດາຜູ້ປະກອບການຊື້-ຂາຍ ກາເຟນໍາອີກ.



# ສຽງຂອງການປ່ຽນແປງ

## ການມີສ່ວນຮ່ວມຂອງຊຸມຊົນຕໍ່ກັບການຜະລິດກະສິກຳແບບຍືນຍົງ

ບັນທຶກ ແລະ ແປໂດຍ: ທ່ານ ຈັດຕຸລິງ ໄຜຈິດ

"ການນຳໃຊ້ປຸ໋ຍເຄມີ ແມ່ນເປັນອັນຕະລາຍຕໍ່ການປູກກາເຟ, ສຸຂະພາບຂອງຄົນເຮົາ ແລະ ເຮັດໃຫ້ສະພາບແວດລ້ອມມີການປ່ຽນແປງ. ທາງທີ່ດີແມ່ນ **ໃຫ້ຫັນມາໃຊ້ຝຸ່ນບົ່ມຈາກກາກຂອງກາເຟ ເຊິ່ງຈະຊ່ວຍເຮັດໃຫ້ຕົ້ນກາເຟໃຫຍ່ສູງ, ອອກໝາກຜົນຫຼາຍ ແລະ ບໍ່ເປັນອັນຕະລາຍຕໍ່ກັບສິ່ງແວດລ້ອມ.**"

**ທ່ານ ນາງ ວອນຈັນ, ຮອງນາຍບ້ານ**
**ບັນຊີ ກຸ່ມຜະລິດກາເຟ**
**ບ້ານ ດາກເດີນ, ເມືອງ ດາກຈຶງ**
**ແຂວງ ເຊກອງ**



ທ່ານ ນາງ ວອນຈັນ ກຳລັງເກັບກາເຟ ທີ່ສວນກາເຟຂອງລາວ.



ທ່ານ ຈີມ ເດີ້ນຈ້ອງຮຽງ ກັບສວນກາເຟຂອງຄອບຄົວ.

"ການປູກຕົ້ນໄມ້ໃຫ້ຮົ່ມໃນສວນກາເຟ **ຈະຊ່ວຍເກັບຮັກສາຄວາມອຸດົມສົມບູນຂອງດິນ, ເຮັດໃຫ້ຕົ້ນກາເຟ ມີຄວາມງາມ, ມີອາຍຸຍືນຫຼາຍປີ ແລະ ໄດ້ໝາກກາເຟທີ່ມີຄຸນະພາບ** ພ້ອມທັງເປັນການຮັກສາລະບົບນິເວດໃຫ້ຍືນຍົງ."

**ທ່ານ ຈີມ ເດີ້ນຈ້ອງຮຽງ, ນາຍບ້ານ**
**ປະທານ ກຸ່ມຜະລິດກາເຟ**
**ບ້ານ ດາກເດີນ, ເມືອງ ດາກຈຶງ**
**ແຂວງ ເຊກອງ**

## ຕິດຕໍ່ພວກເຮົາໄດ້ທີ່:

**ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ**
ຫົວໜ້າ ອົງການ
ເບີໂທ: (+856) 20 5564 2235
ອີເມລ: keoamphone.souvannaphoum@care.org

**ທ່ານ ສອນອຸທິດ ພັນທະລັງສີ**
ຫົວໜ້າ ຫ້ອງການ ແຂວງ ເຊກອງ
ເບີໂທ: (+856) 20 5561 9915
ອີເມລ: soneouthid.phanthalangsy@care.org

**ທ່ານ ກຸ້ງມິ່ງ ຈັ້ງລືໄຊ**
ວິຊາການອາວຸໂສ ສື່ສານ
ເບີໂທ: (+856) 20 5591 8078
ອີເມລ: koungming.changleuxay@care.org

ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ
ຕູ້ ປ.ນ 4328, ຖະໜົນໜອງສ້າງທໍ່,
ບ້ານ ໜອງສ້າງທໍ່, ເມືອງ ໄຊເສດຖາ,
ນະຄອນຫຼວງວຽງຈັນ, ສປປ ລາວ
ເບີໂທ: (+856-21) 217 727

ຫ້ອງການ ເຊກອງ
ເມືອງ ລະມາມ, ແຂວງ ເຊກອງ, ສປປ ລາວ
ເບີໂທ (+856-38) 215 010

Lao.Info@care.org
www.careint.org.la
@careinlaos
@careinlaos

care®